ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 25675 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 20 ກັນຍາ 2024

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ

- ອີງຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12ທັນວາ 2012;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມຂົນສົ່ງ ສະບັບເລກທີ 24763/ກຂສ, ລົງວັນທີ 09 ກັນຍາ 2024.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1** ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ທັນສະໄໝ ແລະ ໄດ້ມາດຕະຖານສາກົນ ແນໃສ່ຮັບປະກັນ ປະສິດທິພາບຂອງຜູ້ຂັບຂີ່, ຫຼຸດຜ່ອນ ການເກີດອຸບປະຕິເຫດ ແລະ ຈະລາຈອນແອອັດ, ມີລະບົບການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ພ້ອມທັງປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2** **ການຄຸ້ມຄອງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ**

ການຄຸ້ມຄອງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ ແມ່ນ ຂະບວນການພິຈາລະນາ ກ່ຽວກັບການສອບເສັງ, ອອກໃບຂັບຂີ່, ຄວບຄຸມ ແລະ ຕິດຕາມກວດກາການນຳໃຊ້ໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ ໃຫ້ຖືກຕ້ອງຕາມປະເພດການອະນຸຍາດ.

**ມາດຕາ 3 ຫຼັກການກ່ຽວກັບວຽກງານຄຸ້ມຄອງໃບຂັບຂີ່**

ການຄຸ້ມຄອງໃບຂັບຂີ່ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
3. ຮັບປະກັນການສອບເສັງໃບຂັບຂີ່ຍານພາຫະນະ ໃຫ້ເປັນມາດຕະຖານດຽວກັນ ໃນຂອບເຂດທົ່ວປະເທດ;
4. ຮັບປະກັນການອອກອະນຸຍາດໃບຂັບຂີ່ຍານພາຫະນະ ໃຫ້ບຸກຄົນ ໂດຍຜ່ານການສອບເສັງຕົວຈິງ.

**ມາດຕາ 4 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຄຸ້ມຄອງໃບຂັບຂີ່ຍານພາຫະນະທາງບົກ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ຊະນິດໃບຂັບຂີ່ຍານພາຫະນະ

**ມາດຕາ 5 ປະເພດໃບຂັບຂີ່ຍານພາຫະນະ**

ໃບຂັບຂີ່ຍານພາຫະນະຂອງ ສປປ ລາວ ມີ ສາມ ປະເພດ ດັ່ງນີ້:

1. ໃບຂັບຂີ່ຍານພາຫະນະພົນລະເຮືອນ;
2. ໃບຂັບຂີ່ລະຫວ່າງປະເທດ;
3. ໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຕ່າງປະເທດ ແລະ ສາກົນ ຢູ່ ສປປ ລາວ.

**ມາດຕາ 6 ຊະນິດໃບຂັບຂີ່ຍານພາຫະນະພົນລະເຮືອນ**

ໃບຂັບຂີ່ຍານພາຫະນະພົນລະເຮືອນ ມີ ຫ້າ ຊະນິດ ດັ່ງນີ້:

1. A: ລົດຈັກ ສອງລໍ້, ສາມລໍ້, ລົດໄຖນາທີ່ແກ່ລໍ້ ແລະ ລົດຕໍ່ອກງ;
2. B: ລົດເບົາ;
3. C: ລົດບັນທຸກສິນຄ້າ;
4. D: ລົດຂົນສົ່ງຜູ້ໂດຍສານ;
5. E: ລົດລາກ.

**ມາດຕາ 7 ໃບຂັບຂີ່ລົດຈັກ, ລົດໄຖນາທີ່ແກ່ລໍ້ ແລະ ລົດຕໍ່ອກງ A**

ໃບຂັບຂີ່ລົດຈັກ, ລົດໄຖນາທີ່ແກ່ລໍ້ ແລະ ລົດຕໍ່ອກງ A ມີ ສີ່ ປະເພດ ດັ່ງນີ້:

1. A ລົດຈັກສອງລໍ້ ຄວາມແຮງບໍ່ເກີນ 125 cc;
2. A1 ລົດຈັກສອງລໍ້ ຄວາມແຮງ ແຕ່ 125 cc ຂຶ້ນໄປ;
3. A2 ລົດຈັກສາມລໍ້ສ່ວນຕົວ, ລົດສອງລໍ້ ແລະ ສາມລໍ້ໂດຍສານ;
4. A3 ລົດໄຖນາທີ່ແກ່ລໍ້ ແລະ ລົດຕໍ່ອກງ.

ມາດຕາ 8 ໃບຂັບຂີ່ລົດເບົາ B

ໃບຂັບຂີ່ລົດເບົາ B ອະນຸຍາດໃຫ້ຂັບຂີ່ຍານພາຫະນະປະເພດລົດເບົາ ສີ່ລໍ້ ທີ່ມີນໍ້າໜັກລວມບໍ່ເກີນ 3.500 ກິໂລກຣາມ ແລະ ບໍ່ເກີນ 9 ບ່ອນນັ່ງລວມທັງຜູ້ຂັບຂີ່.

ມາດຕາ 9 ໃບຂັບຂີ່ລົດຂົນສົ່ງສິນຄ້າ C

ໃບຂັບຂີ່ລົດຂົນສົ່ງສິນຄ້າ C ມີ ສາມ ປະເພດ ດັ່ງນີ້:

1. C ລົດຂົນສົ່ງສິນຄ້ານໍ້າໜັກລວມ ແຕ່ 3.500 ກິໂລກຣາມ ຫາ 7.500 ກິໂລກຣາມ;
2. C1 ລົດຂົນສົ່ງສິນຄ້ານໍ້າໜັກລວມ ເກີນກວ່າ 7.500 ກິໂລກຣາມ ຫາ 15.000 ກິໂລກຣາມ;
3. C2 ລົດຂົນສົ່ງສິນຄ້ານໍ້າໜັກລວມ ເກີນກວ່າ 15.000 ກິໂລກຣາມ.

ມາດຕາ 10 ໃບຂັບຂີ່ລົດຂົນສົ່ງຜູ້ໂດຍສານ D

ໃບຂັບຂີ່ລົດຂົນສົ່ງສິນຄ້າ D ມີ ສາມ ປະເພດ ດັ່ງນີ້:

1. D ລົດຂົນສົ່ງຜູ້ໂດຍສານປະເພດ 4 ລໍ້ຂຶ້ນໄປ, ບໍ່ເກີນ ສິບຫ້າ ບ່ອນນັ່ງ;
2. D1 ລົດຂົນສົ່ງຜູ້ໂດຍສານ ແຕ່ ສິບຫົກ ຫາ ສາມສິບຫ້າ ບ່ອນນັ່ງ;
3. D2 ລົດຂົນສົ່ງຜູ້ໂດຍສານ ແຕ່ ສາມສິບຫົກ ບ່ອນນັ່ງ ຂຶ້ນໄປ.

ມາດຕາ 11 ໃບຂັບຂີ່ລົດລາກ E

ໃບຂັບຂີ່ລົດລາກ E ມີ ສອງ ປະເພດ ດັ່ງນີ້:

1. E ລົດເບົາ (B), ລົດຂົນສົ່ງສິນຄ້າ (C) ແລະ ລົດຂົນສົ່ງຜູ້ໂດຍສານ (D) ທີ່ແກ່ຫາງລາກນໍ້າໜັກລວມບໍ່ເກີນ 750 ກິໂລກຣາມ;
2. E1 ລົດຂົນສົ່ງສິນຄ້າ (C2) ແກ່ຫາງລາກນໍ້າໜັກລວມເກີນກວ່າ 750 ກິໂລກຣາມ.

## ໝວດທີ 3
## ເງື່ອນໄຂ ແລະ ຂັ້ນຕອນ ການສອບເສັງໃບຂັບຂີ່ຍານພາຫະນະ

ມາດຕາ 12 ເງື່ອນໄຂການສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະພົນລະເຮືອນ

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ດຳລົງຊີວິດ ຫຼື ປະຕິບັດໜ້າທີ່ຢູ່ ສປປ ລາວ ທີ່ມີຈຸດປະສົງຢາກສອບເສັງເອົາໃບອະນຸຍາດຂັບຂີ່ຍານພາຫະນະພົນລະເຮືອນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ອາຍຸຂອງຜູ້ສອບເສັງເອົາໃບຂັບຂີ່ຍານພາຫະນະພົນລະເຮືອນ:
   - ປະເພດ A: ຕ້ອງມີອາຍຸຄົບ 15 ປີ ຂຶ້ນໄປ;
   - ປະເພດ A1, A2, A3 ແລະ B: ຕ້ອງມີອາຍຸຄົບ 18 ປີ ຂຶ້ນໄປ;
   - ປະເພດ C: ຕ້ອງມີອາຍຸຄົບ 21 ປີ ຂຶ້ນໄປ;
   - ປະເພດ D: ຕ້ອງມີອາຍຸຄົບ 23 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ B ມາກ່ອນຢ່າງໜ້ອຍ 2 ປີ;
   - ປະເພດ C1: ຕ້ອງມີອາຍຸຄົບ 25 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ C ມາກ່ອນຢ່າງໜ້ອຍ 2 ປີ;

- ປະເພດ D1: ຕ້ອງມີອາຍຸຄົບ 25 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ D ມາກ່ອນຢ່າງໜ້ອຍ 2 ປີ;
- ປະເພດ C2: ຕ້ອງມີອາຍຸຄົບ 28 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ C1 ມາກ່ອນຢ່າງໜ້ອຍ 2 ປີ;
- ປະເພດ D2: ຕ້ອງມີອາຍຸຄົບ 28 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ D1 ມາກ່ອນຢ່າງໜ້ອຍ 2 ປີ;
- ປະເພດ E: ຕ້ອງມີອາຍຸຄົບ 25 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ B, C ຫຼື D ມາກ່ອນຢ່າງໜ້ອຍ 2 ປີ;
- ປະເພດ E1: ຕ້ອງມີອາຍຸຄົບ 28 ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ C1 ມາກ່ອນຢ່າງໜ້ອຍ 2 ປີ;

2. ຕ້ອງມີສຸຂະພາບແຂງແຮງດີ ເຊັ່ນ ຫູໄດ້ຍິນດີ, ສາຍຕາດີ, ບໍ່ບອດສີ, ບໍ່ເປັນຄົນເສຍຈິດ ໂດຍໃຫ້ມີໃບຢັ້ງຢືນກວດກາສຸຂະພາບຈາກໂຮງໝໍ ຫຼື ຢູ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ສໍາລັບແຂວງ, ນະຄອນຫຼວງ ທີ່ມີເຄື່ອງກວດກາສະເພາະ;

3. ຕ້ອງຜ່ານການຝຶກອົບຮົມພາກທິດສະດີ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຫຼື ໂຮງຮຽນສອນຂັບລົດສໍາລັບປະເພດ A;

4. ປະເພດ B, C, D, E ຕ້ອງໄດ້ເຂົ້າຮຽນຕາມຫຼັກສູດຂອງໂຮງຮຽນສອນຂັບລົດ ທີ່ໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;

5. ພາກທິດສະດີຕ້ອງສອບເສັງດ້ວຍລະບົບຄອມພິວເຕີ ແລະ ພາກປະຕິບັດຕົວຈິງຕ້ອງສອບເສັງຢູ່ເດີ່ນທີ່ເປັນແບບສອນຈະລາຈອນ.

ນອກຈາກເງື່ອນໄຂ ທີ່ໄດ້ກໍານົດໄວ້ຂ້າງເທິງ ສໍາລັບຜູ້ພິການຍັງຕ້ອງມີເງື່ອນເພີ່ມເຕີມ ດັ່ງນີ້:

1. ມີໃບຢັ້ງຢືນການປະເມີນຄວາມສາມາດດ້ານໜ້າທີ່ການຂອງອົງຄະຈາກສູນການແພດຟື້ນຟູໜ້າທີ່ການ, ກະຊວງສາທາລະນະສຸກ;

2. ສາມາດນໍາໃຊ້ຍານພາຫະນະຂອງຕົນ ທີ່ໄດ້ປັບປຸງ, ຕິດຕັ້ງ ອຸປະກອນເສີມຕາມຄວາມສາມາດດ້ານໜ້າທີ່ການຂອງອົງຄະ ເຂົ້າໃນການຮຽນ ແລະ ຜ່ານການສອບເສັງ.

ສໍາລັບ A3 ຈະບໍ່ໄດ້ສອບເສັງພາກປະຕິບັດຕົວຈິງ ຜ່ານການຝຶກອົບຮົມຕາມຫຼັກສູດຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຜ່ານການສອບເສັງພາກທິດສະດີ ຈະອອກໃບຂັບຂີ່ ໃຫ້ເລີຍ.

## ມາດຕາ 13 ຂັ້ນຕອນການສອບເສັງເອົາໃບຂັບຂີ່ຍານພາຫະນະພົນລະເຮືອນ

ການສອບເສັງເອົາໃບຂັບຂີ່ຍານພາຫະນະ ມີຂັ້ນຕອນ ດັ່ງນີ້:

1. ສໍາລັບໃບຂັບຂີ່ຍານພາຫະນະພົນລະເຮືອນປະເພດ A

- ຍື່ນຄໍາຮ້ອງຕໍ່ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ຫຼື ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ;
- ໃບຢັ້ງຢືນການຝຶກອົບຮົມຈາກໂຮງຮຽນສອນຂັບລົດ ພາກ ທິດສະດີ ແລະ ປະຕິບັດຕົວຈິງຕາມຫຼັກສູດ ຫຼື ຜ່ານການຝຶກອົບຮົມຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
- ສໍາເນົາບັດປະຈໍາຕົວ ຫຼື ປຶ້ມສໍາມະໂນຄົວ. ສໍາລັບຄົນຕ່າງປະເທດ ຕ້ອງມີໃບອະນຸຍາດພັກເຊົາ ຫຼື ອາໄສ ຫຼື ໃບອະນຸຍາດເຮັດວຽກ ຢູ່ ສປປລາວ ຢ່າງໜ້ອຍ ສາມ ເດືອນ;
- ຈັດຕັ້ງການສອບເສັງພາກ ທິດສະດີ ແລະ ປະຕິບັດຕົວຈິງ.

2. ສໍາລັບໃບຂັບຂີ່ຍານພາຫະນະປະເພດ B,C,D, E

- ຍື່ນຄຳຮ້ອງຕໍ່ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ;

- ມີໃບຢັ້ງຢືນຈົບຫຼັກສູດການຮຽນຂັບລົດຈາກໂຮງຮຽນສອນຂັບລົດທີ່ໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;

- ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ, ສຳລັບຄົນຕ່າງປະເທດ ຕ້ອງມີໃບອະນຸຍາດພັກເຊົາ, ໃບອະນຸຍາດເຮັດວຽກ ຢູ່ ສປປລາວ ຢ່າງໜ້ອຍ ສາມ ເດືອນ;

- ມີໃບຢັ້ງຢືນກວດກາສຸຂະພາບ;

- ມີກະສຽນອາຍຸຕາມທີ່ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;

- ຈັດຕັ້ງການສອບເສັງພາກ ທິດສະດີ ແລະ ປະຕິບັດຕົວຈິງ.

ສຳລັບຜູ້ພິການ ຍັງຕ້ອງມີໃບຢັ້ງຢືນການປະເມີນຄວາມສາມາດດ້ານໜ້າທີ່ການຂອງອົງຄະຈາກສູນການແພດຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກ ວ່າສາມາດສອບເສັງເອົາໃບຂັບຂີ່ຕາມປະເພດສະເໜີຂໍສອບເສັງ.

## ໝວດທີ 4
## ການອອກໃບຂັບຂີ່ ແລະ ອາຍຸໃບຂັບຂີ່ ຍານພາຫະນະ ພົນລະເຮືອນ

ມາດຕາ 14 ການອອກໃບຂັບຂີ່ຍານພາຫະນະພົນລະເຮືອນ

ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ເຊັນໃບຂັບຂີ່ຍານພາຫະນະພົນລະເຮືອນ,ໃບຂັບຂີ່ລະຫວ່າງປະເທດ ແລະ ໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຂອງຕ່າງປະເທດ ແລະ ສາກົນ ຢູ່ ສປປ ລາວ. ກ່ອນໝົດອາຍຸການນຳໃຊ້ ຢ່າງໜ້ອຍ ໜຶ່ງ ເດືອນ, ເຈົ້າຂອງໃບຂັບຂີ່ ຕ້ອງນຳເອົາຜົນກວດສຸຂະພາບ ແລະ ໃບຂັບຂີ່ເດີມ ສະເໜີຕໍ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາຕໍ່ໃບຂັບຂີ່ຍານພາຫະນະ.

**ມາດຕາ 15 ອາຍຸໃບຂັບຂີ່ຍານພາຫະນະ**

ໃບຂັບຂີ່ຍານພາຫະນະແຕ່ລະປະເພດມີອາຍຸການນຳໃຊ້ ດັ່ງນີ້:

1. ໃບຂັບຂີ່ຍານພາຫະນະພົນລະເຮືອນ ມີອາຍຸການນຳໃຊ້ ຫ້າ ປີ;
2. ໃບຂັບຂີ່ລະຫວ່າງປະເທດມີອາຍຸການນຳໃຊ້ ໜຶ່ງ ປີ, ພາຍຫຼັງໝົດອາຍຸນຳໃຊ້ແລ້ວຕ້ອງປະກອບເອກະສານເພື່ອຂໍໃບຂັບຂີ່ລະຫວ່າງປະເທດໃໝ່;
3. ໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຍານພາຫະນະຂອງຕ່າງປະເທດ ແລະ ສາກົນ ຢູ່ ສປປ ລາວ ມີອາຍຸການນຳໃຊ້ ໜຶ່ງ ປີ, ພາຍຫຼັງໝົດອາຍຸນຳໃຊ້ແລ້ວ ຕ້ອງປະກອບເອກະສານເພື່ອຂໍໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຍານພາຫະນະຂອງຕ່າງປະເທດ ແລະ ສາກົນ ຢູ່ ສປປ ລາວ ໃໝ່.

**ມາດຕາ 16 ການນຳໃຊ້ໃບຂັບຂີ່ຍານພາຫະນະຂອງຕ່າງປະເທດ**

ໃບຂັບຂີ່ຍານພາຫະນະຂອງຕ່າງປະເທດ ທີ່ມີອານຸສັນຍາຮັບຮູ້ໃບຂັບຂີ່ຊຶ່ງກັນ ແລະ ກັນ ແລະ ໃບຂັບຂີ່ລະຫວ່າງຕ່າງປະເທດຂອງຄົນຕ່າງປະເທດ ສາມາດນຳໃຊ້ໄດ້ ຢູ່ ສປປລາວ.

## ໝວດທີ 5
## ການສະເໜີປ່ຽນໃບຂັບຂີ່ຍານພາຫະນະພົນລະເຮືອນ

**ມາດຕາ 17 ການສະເໜີຂໍປ່ຽນໃບຂັບຂີ່ຕ່າງປະເທດຂອງຄົນລາວມາເປັນໃບຂັບຂີ່ຍານພາຫະນະພົນລະເຮືອນ**

ພົນລະເມືອງລາວ ທີ່ມີໃບຂັບຂີ່ຂອງຕ່າງປະເທດ, ຄົນຕ່າງປະເທດທີ່ແຕ່ງງານກັບຄົນລາວ, ຄົນຕ່າງປະເທດທີ່ມາດຳລົງຊີວິດ ຢູ່ ສປປລາວ ມີຈຸດປະສົງຂໍປ່ຽນເອົາໃບຂັບຂີ່ຍານພາຫະນະພົນລະເຮືອນ ຕ້ອງປະກອບເອກະສານ ຍື່ນຕໍ່ກົມຂົນສົ່ງ ດັ່ງນີ້:

1. ໃບຄຳຮ້ອງຂໍປ່ຽນໃບຂັບຂີ່ຕາມແບບພິມ;
2. ໃບຢັ້ງຢືນທີ່ຢູ່ສະບັບຕົ້ນ;
3. ໃບຢັ້ງຢືນກວດສຸຂະພາບສະບັບຕົ້ນ;
4. ໃບຂັບຂີ່ຂອງຕ່າງປະເທດ ຊຶ່ງຕ້ອງຍັງມີອາຍຸການນຳໃຊ້ ຫົກ ເດືອນຂຶ້ນໄປ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;
5. ຮູບຖ່າຍສີຂະໜາດ 3X4 ຈຳນວນ 2 ໃບ.

ພາຍຫຼັງໄດ້ຮັບໃບອະນຸຍາດປ່ຽນໃບຂັບຂີ່ຈາກກົມຂົນສົ່ງແລ້ວ ຕ້ອງໄດ້ນຳເອົາເອກະສານທັງໝົດເພື່ອສະເໜີຕໍ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ທີ່ຕົນອາໄສຢູ່ ເພື່ອໃຫ້ກອງດັ່ງກ່າວທົດສອບພາກທິດສະດີຄືນໃໝ່, ພາຍຫຼັງທີ່ໄດ້ທົດສອບຜ່ານແລ້ວ ຈຶ່ງອອກໃບຂັບຂີ່ຍານພາຫະນະພົນລະເຮືອນໄດ້.

**ມາດຕາ 18 ການສະເໜີຂໍປ່ຽນໃບຂັບຂີ່ຕ່າງປະເທດຂອງຄົນຕ່າງປະເທດ ມາເປັນໃບຂັບຂີ່ຍານພາຫະນະພົນລະເຮືອນ**

ນັກທຸລະກິດຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ລົງທຶນ ແລະ ມີໃບອະນຸຍາດດຳເນີນທຸລະກິດ ຢູ່ ສປປ ລາວ ທີ່ມີໃບຂັບຂີ່ຕ່າງປະເທດ ສາມາດປ່ຽນເອົາໃບຂັບຂີ່ຍານພາຫະນະພົນລະເຮືອນໄດ້ ຊຶ່ງຕ້ອງປະກອບເອກະສານ ຍື່ນຕໍ່ກົມຂົນສົ່ງ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດ ພ້ອມທັງຖືສະບັບແທ້ໄປພ້ອມໃນເວລາຍື່ນຄຳຮ້ອງ;
3. ສຳເນົາໃບຂັບຂີ່ຍານພາຫະນະຂອງຕ່າງປະເທດ ຊຶ່ງຕ້ອງຍັງມີອາຍຸການນຳໃຊ້ ຫົກ ເດືອນຂຶ້ນໄປ ພ້ອມທັງຖືສະບັບແທ້ໄປພ້ອມໃນເວລາຍື່ນຄຳຮ້ອງ;
4. ສຳເນົາໜັງສືຜ່ານແດນ ພ້ອມທັງຖືສະບັບແທ້ໄປພ້ອມໃນເວລາຍື່ນຄຳຮ້ອງ;
5. ຮູບຖ່າຍສີຂະໜາດ 3X4 ຈຳນວນ 2 ໃບ.

ພາຍຫຼັງໄດ້ຮັບໃບອະນຸຍາດປ່ຽນໃບຂັບຂີ່ຈາກກົມຂົນສົ່ງແລ້ວ ຕ້ອງໄດ້ນຳເອົາເອກະສານທັງໝົດເພື່ອສະເໜີຕໍ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ທີ່ຕົນອາໄສຢູ່ ເພື່ອໃຫ້ກອງດັ່ງກ່າວທົດສອບພາກທິດສະດີຄືນໃໝ່, ພາຍຫຼັງທີ່ໄດ້ທົດສອບຜ່ານແລ້ວ ຈຶ່ງອອກໃບຂັບຂີ່ຍານພາຫະນະພົນລະເຮືອນໄດ້.

**ມາດຕາ 19 ການສະເໜີຂໍໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຕ່າງປະເທດ ແລະ ສາກົນ ຢູ່ ສປປ ລາວ**

ພະນັກງານ ສະຖານທູດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຊ່ຽວຊານຕ່າງປະເທດ ຕ້ອງປະກອບເອກະສານ ຍື່ນຕໍ່ກົມຂົນສົ່ງ ດັ່ງນີ້:

1. ສະໂນດນຳສົ່ງຈາກກະຊວງການຕ່າງປະເທດ ຫຼື ສະຖານທູດ;

2. ສຳເນົາໃບຂັບຂີ່ຂອງຕ່າງປະເທດຕ້ອງຍັງມີອາຍຸການນຳໃຊ້ ສິບສອງ ເດືອນຂຶ້ນໄປ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;

3. ສຳເນົາໜັງສືຜ່ານແດນ;

4. ຮູບຖ່າຍສີຂະໜາດ 2X2.5 ຈຳນວນ 2 ໃບ.

ສຳລັບ ຊ່ຽວຊານ ທີ່ປະຈຳຢູ່ກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ, ນັກຮຽນ, ນັກສຶກສາ ທີ່ກຳລັງສຶກສາຢູ່ ສປປ ລາວ ຕ້ອງປະກອບເອກະສານຍື່ນຕໍ່ກົມຂົນສົ່ງ ດັ່ງນີ້:

1. ໃບສະເໜີຈາກພາກສ່ວນທີ່ກ່ຽວຂ້ອງ;

2. ສຳເນົາໃບຂັບຂີ່ຂອງຕ່າງປະເທດ ຕ້ອງຍັງມີອາຍຸການນຳໃຊ້ ສິບສອງ ເດືອນ ຂຶ້ນໄປ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;

3. ສຳເນົາໜັງສືຜ່ານແດນ;

4. ຮູບຖ່າຍສີຂະໜາດ 2X2.5 ຈຳນວນ 2 ໃບ.

ສຳລັບ ນັກທຸລະກິດ, ຊາວຄ້າຂາຍ, ກຳມະກອນຕ່າງປະເທດທີ່ດຳລົງຊີວິດ ແລະ ປະກອບອາຊີບ ຢູ່ ສປປ ລາວ ຕ້ອງປະກອບເອກະສານ ຍື່ນຕໍ່ກົມຂົນສົ່ງ ດັ່ງນີ້:

1. ໃບອະນຸຍາດພັກເຊົາ ຈາກຂະແໜງການປ້ອງກັນຄວາມສະຫງົບ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;

2. ໃບອະນຸຍາດເຮັດວຽກ ຈາກຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;

3. ສຳເນົາໃບຂັບຂີ່ຂອງຕ່າງປະເທດ ຕ້ອງຍັງມີອາຍຸການນຳໃຊ້ ສິບສອງ ເດືອນ ຂຶ້ນໄປ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;

4. ສຳເນົາໜັງສືຜ່ານແດນ, ໃນເວລາຍື່ນຄຳຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ;

5. ຮູບຖ່າຍສີຂະໜາດ 2X2.5 ຈຳນວນ 2 ໃບ.

**ມາດຕາ 20 ໃບຂັບຂີ່ລະຫວ່າງປະເທດ**

ໃບຂັບຂີ່ລະຫວ່າງປະເທດ ມີ ສອງ ປະເພດ ດັ່ງນີ້:

1. ໃບຂັບຂີ່ລະຫວ່າງປະເທດຂອງ ສປປ ລາວ ທີ່ອອກໂດຍ ກະຊວງໂຍທາທິການ ແລະ ຂົນສົ່ງ ໃຫ້ແກ່ບຸກຄົນທີ່ມີໃບຂັບຂີ່ຂອງພົນລະເຮືອນລາວ ຢ່າງຖືກຕ້ອງ ເພື່ອນຳໃຊ້ຢູ່ຕ່າງປະເທດ ແລະ ຫ້າມນຳໃຊ້ຢູ່ໃນດິນແດນຂອງສປປລາວ;

2. ໃບຂັບຂີ່ລະຫວ່າງປະເທດຂອງຕ່າງປະເທດ ທີ່ອອກໃຫ້ໂດຍອົງການທີ່ມີສິດອຳນາດ ຂອງຕ່າງປະເທດໃດໜຶ່ງ.

**ມາດຕາ 21 ເງື່ອນໄຂການອອກ ແລະ ການນຳໃຊ້ໃບຂັບຂີ່ລະຫວ່າງປະເທດ**

ໃບຂັບຂີ່ລະຫວ່າງປະເທດ ຂອງ ສປປ ລາວ ແມ່ນອອກໃຫ້ແກ່ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ເພື່ອໄປນຳໃຊ້ຢູ່ຕ່າງປະເທດ ຕາມເງື່ອນໄຂ ດັ່ງນີ້:

1. ມີໃບຂັບຂີ່ຂອງພົນລະເຮືອນລາວ ມາແລ້ວ ໜຶ່ງ ປີ ນັບແຕ່ວັນສອບເສັງໄດ້ໃບຂັບຂີ່ ແລະ ຍັງມີອາຍຸການນຳໃຊ້ເກີນກວ່າ ສາມສິບ ວັນ;

2. ມີໃບຂັບຂີ່ລະຫວ່າງປະເທດຂອງຕ່າງປະເທດສຳລັບຄົນຕ່າງປະເທດ ເຊັ່ນ ພະນັກງານສະຖານທູດ, ອົງການຈັດຕັ້ງສາກົນ, ຊ່ຽວຊານຂອງຕ່າງປະເທດທີ່ເຮັດວຽກນຳການຈັດຕັ້ງຂອງລັດ ແລະ ນັກລົງທຶນທີ່ມີໃບຂັບຂີ່ຂອງຕ່າງປະເທດ ຊຶ່ງຍັງມີອາຍຸນຳໃຊ້ຢ່າງໜ້ອຍ ຫົກ ເດືອນ ເພື່ອນຳໃຊ້ໃນການຂັບຂີ່ໄປປະເທດທີສາມ.

ໃບຂັບຂີ່ລະຫວ່າງປະເທດ ຂອງ ສປປ ລາວ ມີອາຍຸການນຳໃຊ້ ໜຶ່ງ ປີ. ເມື່ອໝົດອາຍຸແລ້ວຕ້ອງໄດ້ປະກອບເອກະສານຂໍເຮັດໃໝ່ ຢູ່ ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 22 ການສະເໜີຂໍປ່ຽນໃບຂັບຂີ່ກອງທັບ ມາເປັນ ໃບຂັບຂີ່ຍານພາຫະນະພົນລະເຮືອນ**

ທະຫານ, ຕຳຫຼວດ, ພະນັກງານ-ລັດຖະກອນ ຫຼື ບຸກຄົນອື່ນ ທີ່ມີໃບຂັບຂີ່ຂອງກອງທັບ ຊຶ່ງຜ່ານການສອບເສັງໄດ້ຕາມຫຼັກສູດຂອງກອງທັບ ແລະ ອອກໃຫ້ໂດຍຂະແໜງການປ້ອງກັນປະເທດ, ຖ້າຈະປ່ຽນເອົາໃບຂັບຂີ່ຂອງພົນລະເຮືອນ ຕ້ອງມີເງື່ອນໄຂ ແລະ ປະກອບເອກະສານ ຍື່ນຕໍ່ກົມຂົນສົ່ງ ດັ່ງນີ້:

1. ໃບຢັ້ງຢືນການປົດປ່ອຍອອກເປັນປະຊາຊົນ ຫຼື ຂໍ້ຕົກລົງກ່ຽວກັບນະໂຍບາຍ ເຂົ້າຮັບອຸດໜູນບຳນານ, ບຳເນັດ ຫຼື ຂໍ້ຕົກລົງກ່ຽວກັບການໄປເຮັດວຽກ ຢູ່ນຳຝ່າຍພົນລະເຮືອນ ຫຼື ສາຍປົກຄອງ;
2. ໄດ້ຮັບການແຕ່ງຕັ້ງໃຫ້ໄປເຮັດວຽກ ຢູ່ໃນການຈັດຕັ້ງ ຫຼື ທຸລະກິດຂອງຝ່າຍພົນລະເຮືອນ ຫຼື ສາຍປົກຄອງ;
3. ໃບຄຳຮ້ອງຂໍປ່ຽນໃບຂັບຂີ່ໂດຍຜ່ານຄຳເຫັນຢັ້ງຢືນຈາກກົມກອງທີ່ກ່ຽວຂ້ອງຂອງຂະແໜງການປ້ອງກັນປະເທດ;
4. ໃບນຳສົ່ງຂອງພາກສ່ວນຄຸ້ມຄອງໃບຂັບຂີ່ຂອງກະຊວງປ້ອງກັນປະເທດ;
5. ເອກະສານສຳນວນເດີມທັງໝົດຂອງໃບຂັບຂີ່ກອງທັບ;
6. ໃບຢັ້ງຢືນທີ່ຢູ່;
7. ໃບຢັ້ງຢືນກວດສຸຂະພາບ;
8. ໃບຂັບຂີ່ກອງທັບສະບັບຕົ້ນ;
9. ຮູບຖ່າຍສີຂະໜາດ 3X4 ຈຳນວນ 6 ໃບ.

ພາຍຫຼັງໄດ້ຮັບການອະນຸຍາດປ່ຽນໃບຂັບຂີ່ຈາກກົມຂົນສົ່ງແລ້ວ ຕ້ອງໄດ້ນຳເອກະສານທັງໝົດໄປສະເໜີຕໍ່ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ທີ່ຕົນອາໄສຢູ່ ແລະ ຕ້ອງໄດ້ຜ່ານການທົດສອບພາກທິດສະດີຄືນໃໝ່ ພາຍຫຼັງທີ່ໄດ້ທົດສອບຜ່ານແລ້ວ ຈຶ່ງອອກໃບຂັບຂີ່ຍານພາຫະນະພົນລະເຮືອນໄດ້.

**ມາດຕາ 23 ການສະເໜີຂໍໃບຂັບຂີ່ຍານພາຫະນະໃໝ່ປ່ຽນແທນສະບັບເກົ່າທີ່ເປື້ອນ, ແຕກ, ຫັກ ແລະ ສູນຫາຍ**

ບຸກຄົນໃດ ຫາກເຮັດໃບຂັບຂີ່ຍານພາຫະນະພົນລະເຮືອນຂອງຕົນ ເປື້ອນ, ແຕກ, ຫັກ ແລະ ສູນຫາຍຕ້ອງປະກອບເອກະສານຕາມຂັ້ນຕອນ ດັ່ງນີ້:

1. ສຳລັບໃບຂັບຂີ່ທີ່ ເປື້ອນ, ແຕກ, ຫັກ ສາມາດຂໍປ່ຽນໃບຂັບຂີ່ໃໝ່ຈາກກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງຂອງຕົນໄດ້ເລີຍ ໂດຍນຳເອົາໃບຂັບຂີ່ສະບັບຕົ້ນທີ່ເປື້ອນ, ແຕກ, ຫັກ ແລະ ໃບສະເໜີຄັດຕິດມາພ້ອມຈຶ່ງສາມາດອອກໃບຂັບຂີ່ສະບັບໃໝ່ໄດ້.
2. ສຳລັບໃບຂັບຂີ່ສູນຫາຍຕ້ອງປະກອບເອກະສານ ດັ່ງນີ້:

2.1 ໃບແຈ້ງສູນຫາຍ ຢັ້ງຢືນຈາກອົງການປົກຄອງບ້ານ ຫຼື ການຈັດຕັ້ງຂອງຕົນ ເພື່ອໃຫ້ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ກວດກາຂໍ້ມູນໃບຂັບຂີ່ ຢ່າງຖືກຕ້ອງແລ້ວຈຶ່ງອອກໃບຢັ້ງຢືນໃຫ້;

2.2 ສຳເນົາບັດປະຈຳຕົວ ຫຼື ສຳເນົາປຶ້ມສຳມະໂນຄົວ;

2.3 ໃບຢັ້ງຢືນຂອງກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ກ່ຽວກັບການສູນຫາຍສະເໜີຕໍ່ພະແນກຕຳຫຼວດຈະລາຈອນ ແຂວງ, ນະຄອນຫຼວງ ເພື່ອກວດກາຄວາມຖືກຕ້ອງ ແລ້ວຈຶ່ງອອກໃບຢັ້ງຢືນໃຫ້ ແລ້ວນຳສະເໜີຕໍ່ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່, ຫຼັງຈາກນັ້ນຈຶ່ງອອກໃບຂັບຂີ່ໃໝ່ໃຫ້.

ໃນກໍລະນີ ໃບຂັບຂີ່ຍານພາຫະນະຫາກຖືກເຈົ້າໜ້າທີ່ຕຳຫຼວດຈະລາຈອນກັກໄວ້ ຍ້ອນການກະທຳຜິດ ຫຼື ລະເມີດກົດຈະລາຈອນນັ້ນ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ຈະບໍ່ພິຈາລະນາອອກໃບຂັບຂີ່ຍານພາຫະນະໃຫ້.

### ມາດຕາ 24 ການຍົກຍ້າຍສຳນວນໃບຂັບຂີ່ຍານພາຫະນະພົນລະເຮືອນ

ບຸກຄົນໃດ ຫາກມີການຍົກຍ້າຍພູມລຳເນົາ ຈາກແຂວງ, ນະຄອນຫຼວງໜຶ່ງ ໄປຢູ່ອີກແຂວງ, ນະຄອນຫຼວງອື່ນ ຕ້ອງໄດ້ສະເໜີຂໍຍົກຍ້າຍສຳນວນໃບຂັບຂີ່ຈາກແຂວງ, ນະຄອນຫຼວງ ເດີມທີ່ຕົນສອບເສັງໃບຂັບຂີ່ໄດ້ ໄປຂໍອອກໃບຂັບຂີ່ໃໝ່ຢູ່ແຂວງ, ນະຄອນຫຼວງອື່ນ ທີ່ຕົນຍົກຍ້າຍໄປຢູ່ຖາວອນນັ້ນ ແລະ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກອບເອກະສານຂໍຍົກຍ້າຍສຳນວນໃບຂັບຂີ່ຍານພາຫະນະພົນລະເຮືອນ;
2. ສຳເນົາສຳມະໂນຄົວ ຫຼື ບັດປະຈຳຕົວ;
3. ນຳເອົາສຳນວນເອກະສານທັງໝົດຍື່ນຕໍ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ທີ່ຕົນຍົກຍ້າຍໄປ.

ພາຍຫຼັງໄດ້ຮັບສຳນວນເອກະສານດັ່ງກ່າວທັງໝົດ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ຈຶ່ງອອກໃບຂັບຂີ່ຍານພາຫະນະພົນລະເຮືອນໃໝ່ ໃຫ້ແກ່ຜູ້ຂັບຂີ່ດັ່ງກ່າວ ໂດຍໃສ່ເລກທີໃບຂັບຂີ່ໃໝ່ຂອງແຂວງ, ນະຄອນຫຼວງ ທີ່ຕົນຍົກຍ້າຍໄປ, ສ່ວນເລກທີຂອງກົມຂົນສົ່ງໃຫ້ຮັກສາໄວ້ຄືເກົ່າ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 25 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສອບເສັງການຂັບຂີ່ ແລະ ອອກໃບຂັບຂີ່ຍານພາຫະນະທາງບົກ ໃຫ້ບຸກຄົນທີ່ອາຍຸບໍ່ເຖິງກະສຽນ ແລະ ບໍ່ຄົບເງື່ອນໄຂ;
2. ພິມໃບຂັບຂີ່ຍານພາຫະນະໂດຍທີ່ບໍ່ໄດ້ຜ່ານຂັ້ນຕອນ ແລະ ເງື່ອນໄຂການສອບເສັງການຂັບຂີ່ຍານພາຫະນະ;
3. ສອບເສັງພາກທິດສະດີ ແບບຖາມ-ຕອບ ປາກເປົ່າ;
4. ຈັດຕັ້ງການສອບເສັງພາກ ປະຕິບັດຕົວຈິງ ຢູ່ເດີ່ນທີ່ບໍ່ໄດ້ຕາມມາດຕະຖານເຕັກນິກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ;
5. ນຳໃຊ້ຜູ້ແປພາສາ ເຂົ້າຊ່ວຍໃນເວລາສອບເສັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ອະນຸຍາດອອກໃບຂັບຂີ່ຍານພາຫະນະທາງບົກ, ໃບຂັບຂີ່ລະຫວ່າງປະເທດ, ອອກໃບຢັ້ງຢືນການນໍາໃຊ້ໃບຂັບຂີ່ຂອງ ຕ່າງປະເທດ ແລະ ສາກົນ ຢູ່ ສປປ ລາວ ໃຫ້ຜູ້ທີ່ບໍ່ມີເງື່ອນໄຂຄົບຖ້ວນ;

2. ຈັດຝຶກອົບຮົມພາກທິດສະດີປະເພດລົດ B, C, D, E ບໍ່ຄົບຕາມຫຼັກສູດໃຫ້ຜູ້ສະເໜີຂໍໃບຂັບຂີ່ຍານພາຫະນະ;

3. ກົດໜ່ວງຖ່ວງດຶງ, ບໍ່ປະຕິບັດໜ້າທີ່ຕາມຂອບເຂດ ແລະ ຄວາມຮັບຜິດຊອບຂອງຕົນ ຫຼື ເມີນເສີຍຕໍ່ການກະທໍາທີ່ບໍ່ຖືກຕ້ອງ ກ່ຽວກັບເອກະສານ ຂໍປ່ຽນ ແລະ ຕໍ່ອາຍຸການນໍາໃຊ້ ໃບຂັບຂີ່ຍານພາຫະນະທາງບົກ;

4. ສົມຮູ້ຮ່ວມຄິດກັບ ໂຮງຮຽນສອນຂັບລົດ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະໂດຍບໍ່ຊອບທໍາ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ການກວດກາວຽກງານໃບຂັບຂີ່ຍານພາຫະນະ

**ມາດຕາ 27 ອົງການຄຸ້ມຄອງໃບຂັບຂີ່ຍານພາຫະນະ**

ອົງການຄຸ້ມຄອງໃບຂັບຂີ່ຍານພາຫະນະ ປະກອບດ້ວຍ:

1. ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
3. ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງວຽກງານໃບຂັບຂີ່ຍານພາຫະນະ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໃບຂັບຂີ່ຍານພາຫະນະ;

2. ໂຄສະນາເຜີຍແຜ່ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໃບຂັບຂີ່ຍານພາຫະນະ;

3. ຄຸ້ມຄອງ, ຕິດຕາມ ກວດກາການສອບເສັງ ແລະ ການອອກໃບຂັບຂີ່ ໃນຂອບເຂດທົ່ວປະເທດ;

4. ສ້າງ ແລະ ຄຸ້ມຄອງ ຖານຂໍ້ມູນໃບຂັບຂີ່ຍານພາຫະນະຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

5. ຄົ້ນຄ້ວາ ສ້າງ ແລະ ປັບປຸງ ລະບົບການສອບເສັງໃບຂັບຂີ່ ພາກ ທິດສະດີ ແລະ ປະຕິບັດຕົວຈິງ ໃຫ້ຄົບຖ້ວນສົມບູນ ແລະ ສອດຄ່ອງກັບສະພາບການ ໃນແຕ່ລະໄລຍະ;

6. ອອກໃບຂັບຂີ່ລະຫວ່າງປະເທດ ໃຫ້ແກ່ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດທີ່ອາໄສ ຢູ່ ສປປ ລາວ ເພື່ອໄປນໍາໃຊ້ຢູ່ຕ່າງປະເທດ;

7. ກວດກາ ແລະ ອອກໃບຢັ້ງຢືນ ການອະນຸຍາດປ່ຽນໃບຂັບຂີ່ຂອງຄົນຕ່າງປະເທດ ແລະ ໃບຂັບຂີ່ສາກົນຂອງຕ່າງປະເທດ ປ່ຽນເປັນໃບຂັບຂີ່ຂອງພົນລະເຮືອນລາວ ໃຫ້ແກ່ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ;

8. ອອກໃບອະນຸຍາດ ຫຼື ໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຂອງຕ່າງປະເທດໃຫ້ແກ່ຄົນຕ່າງປະເທດ ເພື່ອນຳໃຊ້ຢູ່ ສປປ ລາວ;

9. ກວດກາ ແລະ ອອກໃບຢັ້ງຢືນການອະນຸຍາດປ່ຽນໃບຂັບຂີ່ຂອງກອງທັບເປັນໃບຂັບຂີ່ພົນລະເຮືອນໃຫ້ແກ່ ທະຫານ, ຕຳຫຼວດ, ພະນັກງານ-ລັດຖະກອນ ແລະ ບຸກຄົນອື່ນ ທີ່ໄດ້ອອກເປັນພົນລະເຮືອນ ຫຼື ໄປຢູ່ສາຍປົກຄອງ;

10. ຝຶກອົບຮົມທາງດ້ານວິຊາການ ໃຫ້ແກ່ພະນັກງານວິຊາການຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ແລະ ນັກວິຊາການຂອງບັນດາໂຮງຮຽນສອນຂັບລົດ ຢ່າງປົກກະຕິ;

11. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານໃບຂັບຂີ່ຍານພາຫະນະ;

12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໃບຂັບຂີ່ຍານພາຫະນະທາງບົກ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;

13. ອອກຄຳແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາວຽກງານໃບຂັບຂີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ລະບຽບການ ກ່ຽວກັບວຽກງານຄຸ້ມຄອງໃບຂັບຂີ່ຍານພາຫະນະ;

2. ແຕ່ງຕັ້ງຄະນະກຳມະການ ແລະ ຄະນະຊີ້ນຳ ການສອບເສັງໃບຂັບຂີ່ ຢູ່ພາຍໃນແຂວງ, ນະຄອນຫຼວງ ຕົນ;

3. ຄຸ້ມຄອງ, ຕິດຕາມ ກວດກາການສອບເສັງ ແລະ ການອອກໃບຂັບຂີ່ຢູ່ພາຍໃນແຂວງ, ນະຄອນຫຼວງຕົນ ຕາມລະບຽບການທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ;

4. ຊີ້ນຳກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ໃນການກວດກາເອກະສານຂໍສອບເສັງ ຫຼື ປ່ຽນໃບຂັບຂີ່ຍານພາຫະນະພົນລະເຮືອນ ຢູ່ພາຍໃນແຂວງ, ນະຄອນຫຼວງ ຕົນ;

5. ຝຶກອົບຮົມທາງດ້ານວິຊາການ ໃຫ້ແກ່ພະນັກງານວິຊາການຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ຢູ່ພາຍໃນພະແນກໂຍທາທິການ ແລະ ຂົນສົ່ງ, ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ແລະ ນັກວິຊາການຂອງບັນດາໂຮງຮຽນສອນຂັບລົດ ຢ່າງປົກກະຕິ. ໃນກໍລະນີ ແຂວງໃດ ຍັງບໍ່ທັນມີໂຮງຮຽນສອນຂັບລົດໃຫ້ຂະແໜງຂົນສົ່ງ ຫຼື **ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ**, ເທດສະບານ, ນະຄອນ ຈັດຕັ້ງການຝຶກອົບຮົມພາກ ທິດສະດີ, ປະຕິບັດຕົວຈິງ ແລະ ຈັດຕັ້ງການສອບເສັງເອົາໃບຂັບຂີ່ປະເພດ A ຕາມຫຼັກສູດຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ;

6. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານໃບຂັບຂີ່ຍານພາຫະນະ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໃບຂັບຂີ່ຍານພາຫະນະທາງບົກ ໃຫ້ກົມຂົນສົ່ງ, ກະຊວງໂຍທາທິການແລະຂົນສົ່ງ ແລະ ອົງການປົກຄອງຂັ້ນແຂວງ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ,ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາວຽກງານໃບຂັບຂີ່ ກອງຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງ ແລະ ເອກະສານກ່ຽວກັບການສອບເສັງເອົາໃບຂັບຂີ່ຍານພາຫະນະທາງບົກ;
2. ນຳໃຊ້ລະບົບການສອບເສັງ ໃບຂັບຂີ່ຍານພາຫະນະທາງບົກ ຕາມຫຼັກສູດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ;
3. ຈັດຕັ້ງການສອບເສັງເອົາໃບຂັບຂີ່ຍານພາຫະນະທາງບົກ ພາກ ທິດສະດີ ແລະ ປະຕິບັດຕົວຈິງ;
4. ເກັບຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບການສອບເສັງໃບຂັບຂີ່ ແລະ ພິມໃບຂັບຂີ່ຍານພາຫະນະທາງບົກ;
5. ເກັບ ແລະ ປົກປັກຮັກສາສຳນວນເອກະສານໃບຂັບຂີ່ຍານພາຫະນະ ໃຫ້ເປັນຢ່າງດີ;
6. ມອບ ແລະ ຮັບ ສຳນວນເອກະສານໃບຂັບຂີ່ຍານພາຫະນະ ໃຫ້ບຸກຄົນທີ່ຍົກຍ້າຍ ຈາກ ແຂວງ, ນະຄອນຫຼວງຕົນ ໄປ ແຂວງ, ນະຄອນຫຼວງ ອື່ນ;
7. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານໃບຂັບຂີ່ຍານພາຫະນະ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໃບຂັບຂີ່ຍານພາຫະນະທາງບົກ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຕົນ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ເນື້ອໃນການກວດກາ**

ການກວດກາວຽກງານໃບຂັບຂີ່ຍານພາຫະນະທາງບົກ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດລະບຽບການ ກ່ຽວກັບວຽກງານໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂົນສົ່ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການດຳເນີນການສອບເສັງໃບຂັບຂີ່ຍານພາຫະນະທາງບົກ.

**ມາດຕາ 32 ຮູບການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບຮີບດ່ວນ.

ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບຮີບດ່ວນ ຊຶ່ງແມ່ນການກວດກາໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

# ໝວດທີ 8
# ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຂົນສົ່ງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ພະຈິກ 2024 ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງໃບຂັບຂີ່ຍານພາຫະນະທາງບົກ ສະບັບເລກທີ 9163/ຍທຂ, ລົງວັນທີ 11 ພຶດສະພາ 2021.

**ລັດຖະມົນຕີ**

ງາມປະສົງ ເມືອງມະນີ